

# ສາຂາທະນາຄານ ແຫ່ງ ສປປ ລາວ ພາກກາງແຂວງສະຫວັນນະເຂດ




ກອງປະຊຸມເຜີຍແຜ່ ທີ່ຫ້ອງການສຶກສາທິການ ແລະ ກິລາ ເມືອງໜອງບົກ

ໃນຕອນເຊົ້າຂອງວັນທີ 05 ມັງກອນ 2018 ຜ່ານມາ ເວລາ 10 ໂມງ ຫາ 11 ໂມງ 30 ນາທີ, ສາຂາທະນາຄານແຫ່ງ ສປປ ລາວ ພາກກາງແຂວງສະຫວັນນະເຂດ ໂດຍຮ່ວມກັບຫ້ອງການສຶກສາທິການ ແລະ ກິລາ ເມືອງໜອງບົກ ໄດ້ຈັດກອງປະຊຸມເຜີຍແຜ່ ພາລະບົດບາດຂອງ ສາຂາທະນາຄານແຫ່ງ ສປປ ລາວ ພາກກາງແຂວງສະຫວັນນະເຂດ, ບາງມາດຕາຂອງກົດໝາຍວ່າດ້ວຍ ການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 55/ສພຊ ທີ່ຕິດພັນກັບຊີວິດປະຈໍາວັນ, ລະບຽບການສ້າງຕັ້ງສະຖາບັນການເງິນ, ການຮັກສາທະນະບັດ ແລະ ວິທີສັງເກດເງິນປອມ ທີ່ສະໂມສອນຫ້ອງ ວ່າການສຶກສາທິການ ແລະ ກິລາ.

ໃນກອງປະຊຸມເຜີຍແຜ່ໃນຄັ້ງນີ້ ເປັນກຽດເຂົ້າຮ່ວມເປັນປະທານແມ່ນ ທ່ານ ຄໍາບາງ ລັດຕະນະອົກ ຫົວໜ້າຫ້ອງການສຶກສາທິການ ແລະ ກິລາ ເມືອງໜອງບົກ ແລະ ທ່ານ ພູເງິນ ດາໝູພັນ ຮອງຫົວໜ້າພະແນກເສດຖະກິດ-ເງິນຕາ ແລະ ຄຸ້ມຄອງເງິນຕາຕ່າງປະເທດ ແລະ ການເຂົ້າຮ່ວມຮັບຟັງຂອງບັນດາຜູ້ອໍານວຍການໂຮງຮຽນປະຖົມ, ໂຮງຮຽນມັດທະຍົມຕອນຕົ້ນ-ຕອນປາຍ ຂອງເມືອງໜອງບົກ ຊຶ່ງມີຜູ້ເຂົ້າຮ່ວມທັງໝົດຈໍານວນ 76 ທ່ານ.

ໃນກອງປະຊຸມດັ່ງກ່າວໄດ້ຍົກໃຫ້ເຫັນເຖິງຜົນກະທົບ ແລະ ຜົນເສຍຂອງການນໍາໃຊ້ເງິນຕາຕ່າງປະເທດແບບຊະຊາຍທີ່ຜິດກົດໝາຍຂອງບ້ານເມືອງ ພ້ອມນີ້ຍັງໄດ້ແນະນໍາວິທີການຮັກສາທະນະບັດ, ວິທີສັງເກດທະນະບັດປອມ, ການແນະ ນໍາໃຫ້ລະມັດລະວັງໃນການຮັບເງິນຈາກຄົນແປກໜ້າ, ເງິນທີ່ເກົ່າ ແລະ ຂາດ ສາມມາດນໍາໄປແລກເອົາເງິນໃບໃໝ່ໄດ້ ແລະ ຍັງໄດ້ນໍາເອົາເຖິງວຽກງານການສົ່ງເສີມການນໍາໃຊ້ເງິນກີບໃນສັງຄົມ ເປັນຕົ້ນແມ່ນການຕິດປະກາດລາຄາສິນຄ້າ, ການຊໍາລະ ແລະ ການເກັບຄ່າບໍລິການເປັນເງິນກີບ ອັນເປັນປັດໃຈພື້ນຖານທີ່ສໍາຄັນໃນການປະກອບສ່ວນເຮັດໃຫ້ເງິນຕາຂອງຊາດມີສະເຖຍລະພາບ, ເປັນການກະຕຸກຊຸກຍູ້ ສົ່ງເສີມການພັດທະນາເສດຖະກິດຂອງຊາດ ໃຫ້ຈະເລີນ ຮຸ່ງເຮືອງຍິ່ງຂຶ້ນ ແລະ ນອກຈາກນີ້ໃນກອງປະຊຸມຍັງໄດ້ຮຽກຮ້ອງ ໃຫ້ບັນດາຜູ້ເຂົ້າຮ່ວມຈົ່ງໄດ້ນໍາເອົາເນື້ອໃນຈິດໃຈຂອງກອງປະຊຸມ ເພື່ອໄປໂຄສະນາໃຫ້ສະມາຊິກຄອບຄົວ,ໝູ່ເພື່ອນ ຈັດຕັ້ງປະຕິບັດ ເພື່ອຫຼຸດຜ່ອນການນໍາໃຊ້ເງິນຕາຕ່າງປະເທດ ຢູ່ພາຍໃນປະເທດ ເທື່ອລະກ້າວ.

**ຈົ່ງຕິດ, ເອີ້ນ, ຊໍາລະຄ່າບໍລິການ ແລະ ສິນຄ້າເປັນເງິນກີບ**



ພ້ອມດຽວກັນນີ້ ໃນຕອນບ່າຍຂອງວັນດຽວກັນ ທີ່ໂຮງຮຽນມັດທະຍົມຕອນປາຍ ເມືອງໜອງບົກ ກໍ່ໄດ້ມີການຈັດກິດຈະກໍາຕອບຄໍາຖາມກ່ຽວກັບ ວຽກງານຄຸ້ມຄອງເງິນຕາຕ່າງປະເທດ ແລະ ສົ່ງເສີມການນໍາໃຊ້ເງິນກີບ, ຫຼິ້ນເກມ ແລະ ສະແດງຄວາມສາມາດ ຂອງນ້ອງນັກຮຽນເຊັ່ນ: ຮ້ອງ ເພງ, ເຕັ້ນ ແລະ ອື່ນໆ. ຊຶ່ງເຕັມໄປດ້ວຍບັນຍາກາດຟົດຟື້ນມ່ວນຊື່ນ ແລະ ປະທັບໃຈເປັນຢ່າງຍິ່ງ ຜ່ານຮອຍຍິ້ມສຽງຫົວ ແລະ ຄວາມເອົາໃຈໃສ່ປະກອບສ່ວນ ຂອງຄະນະຄູອາຈານ ແລະ ນ້ອງໆນັກຮຽນທັງຍິງ ແລະ ຊາຍ, ຊຶ່ງມີຜູ້ເຂົ້າຮ່ວມກິດຈະກໍາດັ່ງກ່າວປະມານ 470 ຄົນ.


1. ທະນະບັດ ຂາດເຄິ່ງທາງລວງຕັ້ງ ຈະເປັນຂ້າງຊ້າຍຫຼືຂ້າງຂວາຖ້າສ່ວນເຫຼືອນັ້ນຢູ່ໃນສະພາບເຄິ່ງໃບແລກປ່ຽນໄດ້ເຄິ່ງໜຶ່ງຂອງມູນຄ່າ

2. ທະນະບັດ ຂາດທາງລວງຕັ້ງ ແລະ ເປັນທະນະບັດປະເພດດຽວກັນເມື່ອຕໍ່ໃສ່ກັນແລ້ວຄຸນລັກສະນະຂອງທະນະບັດຄົບຖ້ວນແລກປ່ຽນໄດ້ເຕັມມູນຄ່າ

ພາບ ແລະ ຂ່າວໂດຍ: ສຸກສາຄອນ ບັນດາວົງ